ການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ

Free Prior Informed Consent (FPIC)

ບໍ່ຖືກບັງຄັບ, ບໍ່ມີການຈຳແນກ, ບໍ່ເອົາປຽບ ຫຼື ບໍ່ມີການແກ້ແຄ້ນ	ເຂົາເຈົ້າໄດ້ຮັບຂໍ້ມູນຄົບຖ້ວນ ແລະ ມີເວລາພຽງພໍໃນການພິຈາລະນາ ກ່ອນລົງມືຈັດຕັ້ງປະຕິບັດໂຄງການ	ຂໍ້ມູນທັງຫມົດໄດ້ເປີດເຜີຍ ໃຫ້ກັບຜູ້ໄດ້ຮັບຜົນກະທົບ	ຜູ້ໄດ້ຮັບຜົນກະທົບມີສິດຕອບວ່າ “ເຫັນດີ” ຫຼື “ບໍ່ເຫັນດີ” ໂດຍທີ່ມີ ຫຼື ບໍ່ມີເງື່ອນໄຂ. ການຕົກລົງເຫັນດີຕ້ອງເປັນເອກະພາບ ແລະ ສອດຄ່ອງກັບຂະບວນການຕັດສິນໃຈຂອງຜູ້ຖືກກະທົບ.

ຕົວຢ່າງ

ໃຫ້ສົມມຸດວ່າ! ທ່ານເປັນໜຶ່ງໃນສະມາຊິກກຸ່ມຄົນຊົນເຜົ່າໃນບ້ານ. ລັດຖະບານມີໂຄງການ ກະສິກຳເພື່ອໂພຊະນາການໄລຍະ 2 (AFN II) ມາໃຫ້ບ້ານຂອງທ່ານ ແລະເວົ້າວ່າ, “ໂຄງການຈະໃຫ້ທຶນສະໜັບສະໜູນໂຄງການຕ່າງໆທີ່ກ່ຽວຂ້ອງກັບການຜະລິດກະສິກຳ ເພື່ອໂພຊະນາການ; ປະຊາຊົນຄວນຈະປະກອບສ່ວນທີ່ດິນ, ແຮງງານ ແລະຊັບພະຍາກອນທີ່ມີໃນທ້ອງຖິ່ນ, ແລະ ລັດຖະບານຄາດວ່າປະຊາຊົນໃນບ້ານເປົ້າໝາຍຈະມີຢູ່ມີກິນແບບບໍ່ຂາດສານອາຫານ ແລະ ມີລາຍໄດ້ເພີ່ມຂຶ້ນ ຈາກເດີມ 20% ຫຼັງຈົບໂຄງການ”.

ທ່ານຈະຕອບແນວໃດ?

ທ່ານຄວນພິຈາລະນາຜົນກະທົບຕໍ່ຕົວທ່ານເອງ, ຄອບຄົວ, ຊຸມຊົນ ແລະ ວິຖີການດຳລົງຊີວິດໃນຊຸມຊົນຂອງທ່ານ.
ທ່ານຈຳເປັນຕ້ອງຄົ້ນຄ້ວາເບິ່ງຜົນກະທົບຕໍ່ທີ່ດິນ, ວັດທະນະທຳ ແລະຊັບພະຍາກອນທຳມະຊາດໃນຊຸມຊົນຂອງທ່ານ
ປະຊາຊົນໃນບ້ານຂອງພວກທ່ານຈະຕ້ອງຕົກລົງເຫັນດີເຫັນພ້ອມຮັບເອົາໂຄງການກ່ອນທີ່ຈະເລີ່ມຈັດຕັ້ງປະຕິບັດໂຄງການ.

ການເຫັນດີເຫັນພ້ອມດ້ວຍຄວາມສະໝັກໃຈໂດຍໄດ້ຮັບຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC) ໃນໂຄງການ AFN II ກຳນົດໃຫ້ຕ້ອງມີການດຳເນີນ FPIC ໃນເມື່ອ ຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃນເຂດທີ່ມີກຸ່ມຄົນຊົນເຜົ່າອາໄສຢູ່. ການດຳເນີນ FPIC ແມ່ນເພື່ອຮັບປະກັນສິດໃນການຕັດສິນໃຈດ້ວຍຕົນເອງ ແລະ ການມີສ່ວນຮ່ວມໃນການຕັດສິນໃຈທີ່ຈະມີຜົນກະທົບຕໍ່ຕົວທ່ານ, ຄອບຄົວ ຫຼື ຊຸມຊົນຂອງທ່ານເອງ. ຂັ້ນຕອນການຈັດຕັ້ງປະຕິບັດວຽກ FPIC ມີດັ່ງຕໍ່ໄປນີ້:

ການປຶກສາຫາລືນຳປະຊາຊົນ - ຂະບວນການປຶກສາຫາລືແມ່ນເພື່ອຮັບປະກັນວ່າປະຊາຊົນໄດ້ຮັບຂໍ້ມູນຈະແຈ້ງກ່ຽວກັບ ຈຸດປະສົງ, ຂອບເຂດ, ຜົນປະໂຫຍດ, ຄວາມສ່ຽງ, ແລະຄວາມຮັບຜິດຊອບຂອງໂຄງການ. ໃນຂະບວນການດັ່ງກ່າວຕ້ອງຊຸກຍູ້ໃຫ້ທຸກພາກສ່ວນມີສ່ວນຮ່ວມ, ຮັບປະກັນໃຫ້ມີທັງຜູ້ຊາຍ, ຜູ້ຍິງ, ຊາວໜຸ່ມ, ຊົນເຜົ່າ, ຄົນພິການ, ຜູ້ສູງອາຍຸໄດ້ອອກຄວາມຄິດຄວາມເຫັນເຕັມທີ່. ນອກຈາກນັ້ນ, ຍັງເປີດໂອກາດໃນການຖາມຂໍ້ສົງໄສ, ບັນທຶກຄວາມຄິດເຫັນ, ແລະ ສົ່ງເສີມການຕົກລົງຮ່ວມກັນ ເພື່ອຕອບສະໜອງໂຄງການທີ່ຂັບເຄື່ອນໂດຍປະຊາຊົນ.

ເອກະສານການຍິນຍອມເຫັນດີຢ່າງເປັນທາງການ - ເມື່ອໄດ້ການົດກິດຈະກຳ ແລະ ພື້ນທີ່ໂຄງການແລ້ວ, ເອກະສານການຍິນຍອມເຫັນດີຕ້ອງເຮັດເປັນພາສາລາວ, ໂດຍມີການບັນທຶກເປັນພາສາທ້ອງຖິ່ນ ຖ້າເປັນໄປໄດ້. ລາຍລະອຽດການຍິນຍອມໃຫ້ເຮັດໃນລະຫວ່າງການປຶກສາຫາລື ແລະຕ້ອງເກີດຂຶ້ນກ່ອນຈະເລີ່ມຈັດຕັ້ງປະຕິບັດໂຄງການ ຫຼື ກິດຈະກຳ. ແບບຟອມການຍິນຍອມແມ່ນກະກຽມໂດຍທີມງານສະໜັບສະໜູນຂັ້ນເມືອງ (GST) ໂດຍສົມທົບກັບຫ້ອງການປະສານງານຂັ້ນສູນກາງ (NPCO), ເອກະສານການຍິນຍອມຈະອະທິບາຍກິດຈະກຳໂຄງການໂດຍລວມ, ຄວາມຄາດຫວັງ, ໄລຍະເວລາ, ກົນໄກການຮ້ອງທຸກ, ແລະ ເງື່ອນໄຂການຖອນຕົວ, ແລະ ການກຽມເອກະສານ. ເອກະສານການຍິນຍອມ ແລະ ບັນທຶກສະບັບສຸດທ້າຍຈະເຮັດໃນຮູບແບບ ແລະພາສາຕ່າງໆ ທີ່ຮັບປະກັນຄວາມໂປ່ງໃສ ແລະ ຮອງຮັບໄດ້ກັບທຸກພາກສ່ວນທີ່ກ່ຽວຂ້ອງ.

ເອກະສານ ແລະ ການລົງລາຍເຊັນໃນເອກະສານການຍິນຍອມເຫັນດີ - ຮັກສາບັນທຶກການປຶກສາຫາລື, ເອກະສານຍິນຍອມ, ເອກະສານແຜນທີ່, ແລະ ບົດບັນທຶກກອງປະຊຸມຄັດຕິດໄວ້ກັບແຜນການພັດທະນາບ້ານ (VDP), ຮັບປະກັນຄວາມໂປ່ງໃສໂດຍການປະກອບເອກະສານການເລືອກຜູ້ເຂົ້າຮ່ວມ, ເນື້ອໃນການປຶກສາຫາລື ແລະ ພາສາທີ່ໃຊ້ ແລະ ໄດ້ລົງລາຍເຊັນຢ່າງເປັນທາງການຈາກອຳນາດການປົກຄອງບ້ານ ແລະ GST ເພື່ອເຮັດໃຫ້ເອກະສານຍິນຍອມຖືກຕ້ອງຕາມກົດໝາຍກ່ອນການຈັດຕັ້ງປະຕິບັດໂຄງການ.

ເອກະສານຍິນຍອມແມ່ນການຍອມຮັບຂອງປະຊາຊົນຢ່າງເປັນທາງການ, ກຳນົດຂໍ້ຜູກມັດ, ພາລະບົດບາດ ແລະ ກົນໄກການແກ້ໄຂຄຳຮ້ອງທຸກ. ໂຄງການຍັງມີກົນໄກການແກ້ໄຂຄຳຮ້ອງທຸກ (GRM) ທີ່ເປີດໂອກາດໃຫ້ປະຊາຊົນສາມາດຮ້ອງທຸກໄດ້, ແລະ ປະຊາຊົນມີສິດໃນການຖອນຄຳຍິນຍອມນີ້ໄດ້ທຸກເວລາ ຖ້າເຫັນວ່າຂໍ້ກັງວົນຂອງເຂົາເຈົ້າບໍ່ໄດ້ຮັບການແກ້ໄຂ.

F	P	I	C
Free	**Prior**	**Informed**	**Consent**
Free from coercion Free from divide and conquer Free from retaliation	Prior to any part of any activity, all necessary information is provided and shared.	All relevant information is made available to those affected.	The right to say a definitive “no” or “yes” with or without conditions. The agreement process must be agreeable to the decision-making process of the people affected.

EXAMPLE

IMAGINE! You are a member of an indigenous community. The government offers an agriculture for nutrition project to your community and says, “We will provide necessary funds for agriculture production projects; local people are expected to contribute their land, labor, and available resources in the community, and we expect income from this project to increase 20% in the next five years.”

HOW WOULD YOU RESPOND?

You would need to consider the implication for yourself, your family, and your community and way of life.

You would need to know what the impacts on your land, your culture and your natural resources in your community are

You would need to reach consensus in your community BEFORE the project starts.

Free, Prior, Informed Consent (FPIC) in the AFN II Project

The Agriculture for Nutrition Phase II (AFN II) project requires Free, Prior, and Informed Consent (FPIC) when implementing activities in areas inhabited by ethnic communities. FPIC ensures the right to self-determination and participation in decisions affecting them. Some of the key steps include:

Consultations with Communities - The consultation process ensures that communities are well-informed about the project's objectives, scope, benefits, risks, and implementation responsibilities. The process promotes inclusive participation, ensuring that men, women, youth, ethnic groups, persons with disabilities, and elders have a voice. Additionally, it provides a platform for addressing concerns, recording feedback, and fostering mutual agreement to support community- driven initiatives.

Formalizing the Consent Agreement - Once project activities and areas are identified, the consent agreement will be formalized in Lao, with recordings in local languages where possible. The details will be agreed upon during consultations and must occur before the project (or subproject) starts. The agreement form is prepared by the GST with NPCO support, the agreement will outline overall project activities, expectations, duration, grievance mechanism, and withdrawal terms, and documentation. The finalized FPIC agreement and records will be made available in formats and languages that ensure transparency and inclusivity for all stakeholders.

Documentation and Signing of FPIC Agreement - Maintain records of consultations, agreements, mapping documents, and meeting minutes together into the Village Development Plan (VDP), ensure transparency by documenting participant selection, consultation content, and language used and obtain formal signatures from village authorities and the Government Supporting Team (GST) to legally validate the agreement before project implementation.

The FPIC agreement is a formalized community consent, defining commitments, roles, and dispute resolution mechanisms. The project also includes a Grievance Redress Mechanism (GRM) that allows local people to raise complaints, and communities have the right to withdraw their consent at any time if their concerns are not adequately addressed.

IFAD

GAFSP
global agriculture & food security program

WFP